ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເຈົ້າແຂວງ

ເລກທີ 1292/ຈຂ.ອຊ

ອຸດົມໄຊ, ວັນທີ 9 ຕຸລາ 2018

# ຂໍ້ຕົກລົງ

## ວ່າດ້ວຍມາດຕະຖານ ສີ່ ສ ຂອງບັນດາບ້ານໃນຕົວເມືອງຢູ່ແຂວງອຸດົມໄຊ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ວິໄສທັດ 2016 - 2030, ແຜນຍຸດທະສາດການພັດທະນາແຕ່ປີ 2016 - 2025 ແລະ ແຜນພັດທະນາເສດຖະກິດ - ສັງຄົມ 5 ປີ ຄັ້ງທີ VIII, 2016 - 2020 ຂອງແຂວງອຸດົມໄຊ.
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ I ສະບັບເລກທີ 869/ສພຂ.ອຊ, ລົງວັນທີ 28 ກັນຍາ 2018.
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງອຸດົມໄຊ ສະບັບເລກທີ 868/ຄປຈ.ອຊ, ລົງວັນທີ 28 ກັນຍາ 2018.

## ເຈົ້າແຂວງອຸດົມໄຊ ຕົກລົງ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ກຳນົດມາດຕະຖານ ສີ່ ສ ເພື່ອເປັນບ່ອນອີງໃຫ້ແກ່ອົງການປົກຄອງແຂວງ, ເມືອງ, ບ້ານ ແລະ ປະຊາຊົນບັນດາເຜົ່າທີ່ຢູ່ບັນດາບ້ານໃນຕົວເມືອງຂອງແຂວງອຸດົມໄຊໄດ້ປະຕິບັດວຽກງານ ສີ່ ສ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາເສດຖະກິດ, ວັດທະນະທຳ - ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມຕາມທິດເຕີບໂຕສີຂຽວ ແລະ ມີຄວາມຍືນຍົງ.

**ມາດຕາ 2 ມາດຕະຖານ ສີ່ ສ.**

ມາດຕະຖານ ສີ່ ສ ແມ່ນການກຳນົດເງື່ອນໄຂພື້ນຖານໃນການພັດທະນາບ້ານ ເພື່ອວັດແທກຄອບຄົວ, ບ້ານ ແລະ ການຈັດຕັ້ງ, ລັດວິສາຫະກິດ, ທຸລະກິດ ແລະ ນິຕິບຸກຄົນຕາມມາດຕະຖານ ສີ່ ສ ໃຫ້ສອດຄ່ອງກັບຄວາມເປັນຈິງຂອງແຕ່ລະບ້ານ ໃນແຕ່ລະໄລຍະ.

**ມາດຕາ 3 ອະທິບາຍຄຳສັບ.**

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. ສ ສະຫງົບ ໝາຍເຖິງການຄຸ້ມຄອງ, ຕ້ານ, ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ທາງສັງຄົມ ເພື່ອແນໃສ່ເຮັດໃຫ້ທົ່ວສັງຄົມມີຄວາມສະຫງົບ - ປອດໄພ.

2. ສ ສະອາດ ໝາຍເຖິງສະຖານທີ່ຢູ່ອາໄສ, ຖະໜົນຫົນທາງ, ສຳນັກງານ, ສະຖານທີ່ບໍລິການ, ສະຖານທີ່ສາທາລະນະມີຄວາມສະອາດຈົບງາມ, ສະພາບອາກາດສົດຊື່ນ ແລະ ປະຕິບັດຖືກຕ້ອງຕາມຫຼັກສຸຂະອະນາໄມ.

**3. ສ ສີຂຽວ** ໝາຍເຖິງພື້ນທີ່ສີຂຽວໃນຕົວເມືອງ ແລະ ອ້ອມຮອບຕົວເມືອງທີ່ເຕັມໄປດ້ວຍຕົ້ນໄມ້ປະດັບ ແລະ ທຳມະຊາດທີ່ສວຍສົດງົດງາມ.

**4. ສ ສວຍງາມ** ໝາຍເຖິງຄວາມສວຍ ຄວາມງາມທາງດ້ານວັດຖຸຄຽງຄູ່ກັບຄວາມງາມທາງດ້ານຈິດໃຈຂອງປະຊາຊົນບັນດາເຜົ່າ, ອາຄານສະຖານທີ່ເຮັດວຽກ - ສະຖານທີ່ພັກເຊົາ, ທີ່ຢູ່ອາໄສມີຄວາມເປັນລະບົບລະບຽບ, ມີຄວາມສະດວກປອດໄພ, ການບໍລິການວ່ອງໄວ, ສຸພາບຮຽບຮ້ອຍທັງຮັກສາໄດ້ຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມ.

**5. ບ້ານໃນຕົວເມືອງ** ໝາຍເຖິງບັນດາບ້ານທີ່ຢູ່ໃຈກາງຂອງພື້ນທີ່ຕົວເມືອງ ຊຶ່ງກວມເອົາບັນດາບ້ານຈຳນວນໜຶ່ງໃນຕົວເມືອງ ໂດຍອີງຕາມຂອບເຂດທີ່ແຕ່ລະເມືອງໄດ້ກຳນົດໃນແຕ່ລະໄລຍະ.

## ໝວດທີ II
## ເນື້ອໃນມາດຕະຖານ ສີ່ ສ

**ມາດຕາ 4 ມາດຕະຖານຄອບຄົວ ສີ່ ສ.**

**1. ສ ສະຫງົບ.**

1). ເປັນຄອບຄົວທີ່ມີຄວາມສະຫງົບ, ມີຄວາມສາມັກຄີພາຍໃນ - ພາຍນອກດີ, ມີສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການໄດ້ດີ.

2). ເປັນຄອບຄົວທີ່ໄດ້ຮັບການປະເມີນເປັນຄອບຄົວປ້ອງກັນຄວາມສະຫງົບດີ ແລະ ເປັນຄອບຄົວແບບຢ່າງໃນການປະຕິບັດກົດໝາຍ.

3). ມີຄວາມຕື່ນຕົວທາງດ້ານການເມືອງ ແລະ ຫ້າວຫັນປະກອບສ່ວນເຂົ້າໃນວຽກງານລວມຂອງບ້ານ ເຊັ່ນ: ເຂົ້າຮ່ວມກອງປະຊຸມທີ່ບ້ານຈັດຂຶ້ນ, ຊ່ວຍວຽກບ້ານ, ປະກອບສ່ວນການອອກແຮງງານ ແລະ ການປ້ອງກັນເວນຍາມ.

4). ເປັນຄອບຄົວທີ່ພົ້ນທຸກ ແລະ ປະກອບອາຊີບທີ່ບໍ່ຂັດກັບກົດໝາຍ ແລະ ລະບຽບການ.

5). ເປັນຄອບຄົວປະຕິບັດສິດສະເໝີພາບຍິງ - ຊາຍ ແລະ ປາສະຈາກການໃຊ້ຄວາມຮຸນແຮງໃນຄອບຄົວໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ.

6). ບໍ່ສ້າງສິ່ງລົບກວນ ເຊັ່ນ: ກິ່ນ, ສີ, ແສງ, ສຽງທີ່ສົ່ງຜົນກະທົບຕໍ່ຜູ້ຢູ່ອາໄສອ້ອມຂ້າງ.

7). ເປັນຄອບຄົວທີ່ໄດ້ຂຶ້ນທະບຽນສຳມະໂນຄົວ ແລະ ທຸກຄົນໃນຄອບຄົວໄດ້ຈົດທະບຽນຄອບຄົວຕາມກົດໝາຍ.

**2. ສ ສະອາດ.**

1). ເປັນຄອບຄົວທີ່ອະນາໄມທີ່ຢູ່ອາໄສ, ແຄມທາງ ແລະ ຕອນດິນເປົ່າຫວ່າງໃຫ້ມີຄວາມສະອາດງາມຕາ, ບໍ່ຈູດ - ຖິ້ມຂີ້ເຫຍື້ອຊະຊາຍ.

2). ມີການບຳບັດນ້ຳເປື້ອນທີ່ເໝາະສົມ, ບໍ່ຖົມ ຫຼື ອັດຕັນຫ້ວຍ, ຮ່ອງນ້ຳ - ທາງໄຫຼຂອງນ້ຳ, ບໍ່ມີນ້ຳຂັງ - ນ້ຳອັ່ງ ແລະ ບໍ່ປ່ອຍນ້ຳເສຍ - ນ້ຳເປື້ອນ ຫຼື ສິ່ງເສດເຫຼືອຊະຊາຍທີ່ສົ່ງຜົນກະທົບຕໍ່ທີ່ຢູ່ອາໄສຂອງປະຊາຊົນ ແລະ ສິ່ງແວດລ້ອມ.

3). ເຂົ້າຮ່ວມການອອກແຮງງານລວມຂອງບ້ານ ແລະ ຂະບວນການຕ່າງໆ ທີ່ບ້ານ ແລະ ການຈັດຕັ້ງຕ່າງໆ ຈັດຂຶ້ນເປັນປົກກະຕິ.

4). ມີຖັງຂີ້ເຫຍື້ອ ຫຼື ບ່ອນເກັບມ້ຽນຂີ້ເຫຍື້ອເປັນຢ່າງດີ ພ້ອມທັງໄດ້ໃຊ້ການບໍລິການນຳບໍລິສັດເກັບມ້ຽນຂີ້ເຫຍື້ອຢ່າງເປັນປົກກະຕິ.

5). ການສັນຈອນຕາມຖະໜົນຫົນທາງ ຫຼື ເຂດສາທາລະນະ ຕ້ອງຮັກສາຄວາມສະອາດ ແລະ ບໍ່ຖິ້ມຂີ້ເຫຍື້ອຊະຊາຍ.

6). ບໍ່ລ້ຽງສັດທີ່ສ້າງບັນຫາ ແລະ ສິ່ງຜົນກະທົບຕໍ່ທີ່ຢູ່ອາໄສ, ການເຄື່ອນໄຫວໄປ - ມາຂອງປະຊາຊົນ ແລະ ການສັນຈອນຕາມທ້ອງຖະໜົນ.

7). ປະຕິບັດວຽກງານສາມສະອາດໄດ້ດີ ແລະ ເປັນຄອບຄົວແບບຢ່າງດ້ານສາທາລະນະສຸກ.

**3. ສ ສີຂຽວ.**

1). ບໍລິເວນອ້ອມແອ້ມເຮືອນມີຕົ້ນໄມ້ຮົ່ມເຢັນດີ.

2). ມີດອກໄມ້ປະດັບປະດາ, ມີພື້ນທີ່ສີຂຽວ ແລະ ຕົບແຕ່ງສວຍງາມ.

3). ບໍ່ຕັດຕົ້ນໄມ້ທີ່ລັດໄດ້ປູກ, ລັດສະຫງວນ ແລະ ຫວງຫ້າມ ໂດຍບໍ່ໄດ້ຮັບອະນຸຍາດ.

**4. ສ ສວຍງາມ.**

1). ບໍລິເວນອ້ອມແອ້ມເຮືອນ, ທີ່ພັກອາໄສເປັນລະບົບລະບຽບດີ, ມີການປະດັບເອ້.

2). ມີໄຟຟ້າໃຊ້ເປັນປົກກະຕິ.

3). ໄດ້ຮັບໃບຢັ້ງຢືນເປັນຄອບຄົວວັດທະນະທຳ.

4). ການປຸກສ້າງ - ກໍ່ສ້າງຖືກຕ້ອງຕາມລະບຽບກົດໝາຍ ແລະ ເປັນລະບຽບດີ.

5). ບໍ່ຈອດພາຫະນະ, ບໍ່ກອງວັດສະດຸ, ວັດຖຸສິ່ງຂອງຕ່າງໆຕາມໜ້າທາງ - ແຄມທາງທີ່ເປັນການລົບກວນ, ລໍາຄານ ແລະ ກີດຂວາງການໄປ - ມາ ຕາມຖະໜົນຫົນທາງ.

**ມາດຕາ 5 ມາດຕະຖານບ້ານ ສີ່ ສ.**

**1. ສ ສະຫງົບ.**

1). ລະບົບການຈັດຕັ້ງບ້ານຄົບຖ້ວນ ແລະ ໄດ້ເຄື່ອນໄຫວປະຕິບັດວຽກງານຢ່າງເປັນປົກກະຕິ.

2). ປະຊາຊົນມີຄວາມຕື່ນຕົວທາງດ້ານການເມືອງ, ປະກອບສ່ວນ ແລະ ເຂົ້າຮ່ວມປະຊຸມຢູ່ນຳບ້ານແຕ່ລະຄັ້ງ ບໍ່ຫຼຸດແປດສິບສ່ວນຮ້ອຍຂຶ້ນໄປຂອງຈຳນວນຄອບຄົວພາຍໃນບ້ານ.

3). ປະຊາຊົນພາຍໃນບ້ານມີຄວາມສາມັກຄີ ຮັກແພງ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

4). ຄອບຄົວພາຍໃນບ້ານໄດ້ຮັບໃບຢັ້ງຢືນເປັນຄອບຄົວເຮັດວຽກປ້ອງກັນຄວາມສະຫງົບ ເກົ້າສິບສ່ວນຮ້ອຍຂຶ້ນໄປ.

5). ເປັນບ້ານທີ່ສາມາດຄຸ້ມຄອງຮ້ານບໍລິການ, ງານບຸນປະເພນີ, ງານທາງສາສະໜາຕ່າງໆຕາມຂອບເຂດສິດ ແລະ ການຄຸ້ມຄອງຂອງບ້ານ.

6). ປະກອບສ່ວນວຽກງານການປ້ອງກັນເວນຍາມບ້ານເປັນປົກກະຕິ.

7). ບໍ່ມີປະກົດການຫຍໍ້ທໍ້ທີ່ຮ້າຍແຮງ ຊຶ່ງໄດ້ສ້າງບັນຫາໃຫ້ແກ່ຊຸມຊົນ, ຄອບຄົວ, ການຈັດຕັ້ງ ແລະ ມີຜົນກະທົບຕໍ່ການດຳລົງຊີວິດ ແລະ ການພັດທະນາເສດຖະກິດ - ສັງຄົມ.

8). ມີກົດລະບຽບບ້ານ.

**2. ສ ສະອາດ.**

1). ບັນດາຄອບຄົວພາຍໃນບ້ານ ໄດ້ໃຊ້ບໍລິການນຳບໍລິສັດຜູ້ຮັບເໝົາເກັບມ້ຽນຂີ້ເຫຍື້ອກວມຮ້ອຍສ່ວນຮ້ອຍ.

2). ພາຍໃນບ້ານ, ຕອນດິນຕາມແຄມທາງ, ສະຖານທີ່ຕ່າງໆບໍ່ຮົກເຮື້ອ - ເປື້ອນເປິະ ແລະ ທ້ວຍຮ່ອງຄອງນ້ຳມີຄວາມສະອາດ, ບໍ່ມີນ້ຳອັ່ງ - ນ້ຳຂັງ.

3). ມີການສ້າງຂະບວນການອະນາໄມລວມພາຍໃນບ້ານຢ່າງເປັນປົກກະຕິທຸກໆເດືອນ.

4). ເປັນບ້ານແບບຢ່າງດ້ານສາທາລະນະສຸກ.

5). ບໍ່ລ້ຽງສັດທີ່ສ້າງບັນຫາ ແລະ ສິ່ງຜົນກະທົບຕໍ່ທີ່ຢູ່ອາໄສ, ການເຄື່ອນໄຫວໄປ - ມາຂອງປະຊາຊົນ ແລະ ການສັນຈອນຕາມທ້ອງຖະໜົນ.

6). ບໍ່ມີຮ້ານບໍລິການ, ການຜະລິດ, ທຸລະກິດ, ທີ່ຢູ່ອາໄສທີ່ສ້າງຜົນກະທົບຕໍ່ຊຸມຊົນ, ຖະໜົນຫົນທາງ ແລະ ສະພາບແວດລ້ອມຂອງຕົວເມືອງ.

7). ພາຍໃນບ້ານມີນ້ຳສະອາດໃຊ້ ແລະ ມີວິດຖ່າຍສະອາດກວມຮ້ອຍສ່ວນຮ້ອຍ.

**3. ສ ສີຂຽວ.**

1). ຈຳນວນຄອບຄົວທີ່ປູກຕົ້ນໄມ້, ດອກໄມ້ - ພື້ນທີ່ສີຂຽວ ກວມແປດສິບສ່ວນຮ້ອຍຂຶ້ນໄປຂອງຈຳນວນຄອບຄົວທັງໝົດ.

2). ບໍ່ຕັດຕົ້ນໄມ້ທີ່ລັດປູກ, ລັດສະຫງວນ ແລະ ຫ່ວງຫ້າມໂດຍບໍ່ໄດ້ຮັບອະນຸຍາດ; ພາຍໃນບ້ານມີການກຳນົດເຂດສະຫງວນພັດທະນາສີຂຽວ.

**4. ສ ສວຍງາມ.**

1). ພາຍໃນບ້ານມີທາງປູດິນດີ ຫຼື ປູຢາງ ກວມຫົກສິບສ່ວນຮ້ອຍຂຶ້ນໄປຂອງເສັ້ນທາງທີ່ມີພາຍໃນບ້ານ.

2). ບັນດາຄອບຄົວພາຍໃນບ້ານມີໄຟຟ້າໃຊ້ເປັນປົກກະຕິ ກວມຮ້ອຍສ່ວນຮ້ອຍຂອງຄອບຄົວທັງໝົດພາຍໃນບ້ານ.

3). ມີສະຖານທີ່ຈອດລົດ ແລະ ການຈອດລົດເປັນລະບົບລະບຽບດີ.

4). ພາຍໃນບ້ານມີຄວາມສະອາດງາມຕາ ແລະ ເປັນລະບຽບຮຽບຮ້ອຍດີ.

5). ເປັນບ້ານທີ່ມີຄອບຄົວສະຫງົບ, ສະອາດ, ສີຂຽວ ກວມແປດສິບສ່ວນຮ້ອຍຂຶ້ນໄປ.

6). ມີຄອບຄົວວັດທະນະທຳ ກວມແປດສິບສ່ວນຮ້ອຍຂຶ້ນໄປຂອງຄອບຄົວທັງໝົດພາຍໃນບ້ານ.

7). ມີການສົ່ງເສີມ, ອະນຸລັກຮີດຄອງປະເພນີອັນດີງາມຂອງບ້ານ ແລະ ການປົກປັກຮັກສາຮ່ອງຮອຍປະຫັວດສາດ, ວັດຖຸບູຮານ, ປູຊະນີສະຖານທີ່ມີຢູ່ພາຍໃນບ້ານ.

**ມາດຕາ 6 ມາດຕະຖານ ສີ່ ສ ສຳລັບບັນດາຫ້ອງການ, ລັດວິສາຫະກິດ ແລະ ທຸລະກິດ.**

**1. ສ ສະຫງົບ.**

1). ພາຍໃນສຳນັກງານ, ບ່ອນດຳເນີນທຸລະກິດມີຄວາມສະຫງົບ, ມີຜູ້ປ້ອງກັນເວນຍາມ ຫຼື ໜ່ວຍປ້ອງກັນເວນຍາມ ແລະ ໄດ້ເຄື່ອນໄຫວປ້ອງກັນເວນຍາມເປັນປົກກະຕິ.

2). ປະຕິບັດພັນທະ, ລະບຽບກົດໝາຍໄດ້ດີ ແລະ ຊັບສິນ ສິ່ງຂອງມີຄວາມປອດໄພດີ.

3). ມີລະບົບການຈັດຕັ້ງຄົບຖ້ວນ ແລະ ສາມາດເຄື່ອນໄຫວວຽກງານເປັນປົກກະຕິດີ; ທຸລະກິດໄດ້ເຄື່ອນໄຫວຖືກຕ້ອງຕາມການອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງ.

4). ສຳນັກງານ/ຫ້ອງການ, ບ່ອນດຳເນີນທຸລະກິດ ຕ້ອງມີຮົ້ວອ້ອມ ຫຼື ມີການປ້ອງກັນທີ່ດີ.

**2. ສ ສະອາດ.**

1). ບໍລິເວນອ້ອມແອ້ມສຳນັກງານ/ຫ້ອງການ, ບ່ອນດຳເນີນທຸລະກິດ ມີຄວາມສະອາດງາມຕາ.

2). ມີບ່ອນເກັບມ້ຽນຂີ້ເຫຍື້ອ ແລະ ໃຊ້ບໍລິການນຳບໍລິສັດເກັບມ້ຽນຂີ້ເຫຍື້ອເປັນປົກກະຕິ.

3). ສ້າງຂະບວນການອອກແຮງງານພາຍໃນເປັນປົກກະຕິ ແລະ ເຂົ້າຮ່ວມຂະບວນການອອກແຮງງານລວມທີ່ຂັ້ນເທິງຈັດຂຶ້ນເປັນປົກກະຕິ.

**3. ສ ສີຂຽວ.**

1). ມີຕົ້ນໄມ້ໃຫ້ຮົ່ມດີ, ມີດອກໄມ້ປະດັບທີ່ສວຍງາມ; ສຳລັບສຳນັກງານ, ອາຄານດຳເນີນທຸລະກິດທີ່ມີເນື້ອທີ່ດິນກ້ວາງຂວາງ ແມ່ນໃຫ້ມີຕົ້ນໄມ້ປະດັບຕາມຄວາມເໝາະສົມ.

2). ບໍ່ຕັດຕົ້ນໄມ້ທີ່ລັດປູກ, ລັດສະຫງວນ ແລະ ຫ່ວງຫ້າມໂດຍບໍ່ໄດ້ຮັບອະນຸຍາດ.

**4. ສ ສວຍງາມ.**

1). ການນຸ່ງຖືຂອງພະນັກງານສຸພາບຮຽບຮ້ອຍດີ.

2). ອ້ອມແອ້ມສຳນັກງານ ແລະ ອາຄານບໍລິການມີການປະດັບປະດາໃຫ້ຈົບງາມ.

3). ຖະໜົນຫົນທາງເຂົ້າ - ອອກສະດວກດີ ແລະ ມີບ່ອນຈອດລົດພຽງພໍ.

4). ມີໄຟຟ້າແສງສະຫວ່າງພຽງພໍ ແລະ ເປີດໃຊ້ເປັນປົກກະຕິ.

5). ສຳນັກງານ - ອົງການ, ສະຖານທີ່ບໍລິການ ໄດ້ຮັບການປັບປຸງໃຫ້ງາມຢູ່ສະເໝີ.

## ໝວດທີ III
## ການປະເມີນ, ການຢັ້ງຢືນ ແລະ ການຮັບຮອງ

**ມາດຕາ 7 ການປະເມີນ.**

ການປະເມີນວຽກງານ ສີ່ ສ ແມ່ນປະເມີນຕາມມາດຕະຖານ ທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້ ແລະ ໃຫ້ປະເມີນໃນທ້າຍປີຂອງທຸກໆປີ.

**ມາດຕາ 8 ການຢັ້ງຢືນ ແລະ ການຮັບຮອງ.**

ການຢັ້ງຢືນ ແລະ ການຮັບຮອງຄອບຄົວ, ບ້ານ, ລັດວິສາຫະກິດ, ທຸລະກິດ ແລະ ບັນດາຫ້ອງການ ສີ່ ສ ແມ່ນຄະນະຮັບຜິດຊອບການປະເມີນຂອງເມືອງເປັນຜູ້ປະເມີນ ແລະ ນຳສະເໜີຕໍ່ເຈົ້າເມືອງ ເພື່ອພິຈາລະນາອອກໃບຢັ້ງຢືນ ແລະ ຮັບຮອງ.

## ໝວດທີ IV
## ບົດບັນຍັດສຸດທ້າຍ

**ມາດຕາ 9 ການປັບປຸງ ແລະ ປ່ຽນແປງມາດຕະຖານ ສີ່ ສ.**

ມາດຕະຖານ ສີ່ ສ ຈະມີການປັບປຸງ ແລະ ປ່ຽນແປງໄປຕາມການຂະຫຍາຍຕົວຂອງເສດຖະກິດ - ສັງຄົມໃນແຕ່ລະໄລຍະ.

**ມາດຕາ 10 ການຈັດຕັ້ງປະຕິບັດ.**

ມອບໃຫ້ອົງການປົກຄອງແຂວງແຕ່ງຕັ້ງຄະນະຮັບຜິດຊອບວຽກງານ ສີ່ ສ ຂັ້ນແຂວງ ແລະ ອອກຄຳແນະນຳໃນການຈັດຕັ້ງປະຕິບັດວຽກງານແຕ່ລະ ສ ໃຫ້ລະອຽດຈະແຈ້ງຕື່ມອີກ.

ການຈັດຕັ້ງປະຕິບັດວຽກງານ ສີ່ ສ ຕ້ອງສ້າງໂຄງການຈັດຕັ້ງປະຕິບັດວຽກງານແຕ່ລະ ສ ໃຫ້ສອດຄ່ອງກັບສະພາບຕົວຈິງຂອງແຕ່ລະເມືອງ.

ມອບໃຫ້ເຈົ້າເມືອງແຕ່ລະເມືອງແຕ່ງຕັ້ງຄະນະຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານ ສີ່ ສ ພາຍໃນເມືອງຂອງຕົນເອງ, ກຳນົດໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຄະນະຮັບຜິດຊອບໃຫ້ລະອຽດ ພ້ອມທັງຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ງົບປະມານໃນການປະຕິບັດວຽກງານ ສີ່ ສ ແມ່ນໄດ້ມາຈາກການປະກອບສ່ວນຂອງບັນດາຄອບຄົວ, ບຸກຄົນ, ນິຕິບຸກຄົນ, ບ້ານ, ການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດ ແລະ ມີງົບປະມານຂອງລັດ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວ ແລະ ພັດທະນາໃນແຕ່ລະໄລຍະໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ ເປັນຕົ້ນໄປ.

ເຈົ້າແຂວງອຸດົມໄຊ

ແຂວງອຸດົມໄຊ
ເຈົ້າແຂວງ

ປອ ຄຳພັນ ເຜີຍຍະວົງ

ບ່ອນສົ່ງ:

- ຫ້ອງວ່າການແຂວງ 01 ສະບັບ.
- ຫ້ອງວ່າການເມືອງ ບ່ອນລະ 01 ສະບັບ.
- ເຈົ້າເມືອງ 07 ເມືອງ ເມືອງລະ 01 ສະບັບ.
- ອພບຕ 01 ສະບັບ.
- ສຳເນົາ 01 ສະບັບ.